# ກອງປະຊຸມທົບທວນປະຈຳປີ 2011 ຂອງໂຄງການກົດໝາຍສາກົນ ໄລຍະ 3




ໃນວັນທີ 16 ທັນວາ 2011, ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ ຮ່ວມກັບບັນດາຜູ້ໃຫ້ທຶນ ຄື: ອົງການສະຫະປະຊາຊາດເພື່ອການພັດທະນາ, ສະຫະພາບເອີຣົບ ແລະ ສະຖານທູດປະເທດແຟັງລັງ ໄດ້ຈັດຕັ້ງກອງປະຊຸມທົບທວນການຈັດຕັ້ງປະຕິບັດໂຄງການກົດໝາຍສາກົນ ໄລຍະ 3 ປະຈຳປີ 2011 ຂຶ້ນ ໂດຍການເປັນປະທານຮ່ວມຂອງ ທ່ານ ອາລຸນແກ້ວ ກິດຕິຄຸນ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ທ່ານ ມິນ ຟາມ, ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ, ທ່ານ ນ. ເຮເລັນນາ ອາໂຮລາ, ທີ່ປຶກສາປະຈຳສະຖານທູດແຟັງລັງ ແລະ ທ່ານ ດຣ. ສະເຕຟານ ລອກ, ຫົວໜ້າຂະແໜງການຮ່ວມມືຂອງສະຫະພາບເອີຣົບປະຈຳ ສປປ ລາວ ເຊິ່ງມີຜູ້ເຂົ້າຮ່ວມຈາກບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ, ແລະ ອົງການຈັດຕັ້ງສາກົນ ເຂົ້າຮ່ວມ 60 ທ່ານ, ເປັນຍິງ 15 ທ່ານ.

ກອງປະຊຸມ ໄດ້ຮັບຟັງການສະເໜີກ່ຽວກັບການຈັດຕັ້ງບັນດາກິດຈະກຳຂອງໂຄງການກົດໝາຍສາກົນໃນປີ 2011, ແລະ ແຜນການເຄື່ອນໄຫວຂອງໂຄງການໃນປີ 2012 ເຊິ່ງເປັນປີສຸດທ້າຍຂອງການຈັດຕັ້ງປະຕິບັດໂຄງການ. ໃນປີ 2011 ທີ່ຜ່ານມາ, ໂຄງການກົດໝາຍສາກົນ ໄລຍະ 3 ໄດ້ຈັດຕັ້ງຫຼາຍກິດຈະກຳ ເປັນຕົ້ນແມ່ນການຈັດຕັ້ງກອງປະຊຸມສຳມະນາ, ການຝຶກອົບຮົມ, ການເຜີຍແຜ່ສົນທິສັນຍາສາກົນ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ ແລະ ອື່ນໆ ທີ່ແນໃສ່ສ້າງຂີດຄວາມສາມາດໃນຂົງເຂດກົດໝາຍສາກົນ ແລະ ສົນທິສັນຍາສາກົນ ໃຫ້ແກ່ພະນັກງານຂອງບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ, ເຈົ້າໜ້າທີ່ຂອງບັນດາແຂວງ ແລະ ເມືອງ

ຈຳນວນໜຶ່ງ, ນັກສຶກສາກົດໝາຍທົ່ວປະເທດ, ອົງການຈັດຕັ້ງທາງສັງຄົມຂອງ ສປປ ລາວ ແລະ ອື່ນໆ. ພ້ອມກັນນີ້, ໂຄງການກົດໝາຍສາກົນ ຍັງປະກອບສ່ວນໃຫ້ແກ່ການລົງນາມຂອງ ສປປ ລາວ ໃນສົນທິສັນຍາສາກົນທີ່ສຳຄັນຂອງ ສປຊ ຄື: ຂໍ້ຕົກລົງຫຼາຍຝ່າຍວ່າດ້ວຍການສ້າງຕັ້ງຄັງຄວາມຄິດສຳລັບປະເທດດ້ອຍພັດທະນາທີ່ບໍ່ມີຊາຍແດນຕິດກັບທະເລ ແລະ ສົນທິສັນຍາອື່ນໆຈຳນວນໜຶ່ງ.




ໂຄງການກົດໝາຍສາກົນໄລຍະ 3 ມີກຳນົດການຈັດຕັ້ງປະຕິບັດ ເປັນເວລາ 4 ປີ ຄື ນັບແຕ່ປີ 2009 ຈົນເຖິງ ປີ 2012. ໂຄງການ ນີ້ ແມ່ນຖືເອົາການພັດທະນາຄວາມສາມາດແຫ່ງຊາດ ເປັນໃຈກາງໃນທຸກໆກິດຈະກຳຂອງໂຄງການ. ການສ້າງຄວາມເຂັ້ມແຂງສາມາດທາງດ້ານຄວາມສາມາດຂອງພະນັກງານ ແລະ ເຈົ້າໜ້າທີ່ລາວ ເປັນປັດໃຈ ແລະ ເງື່ອນໄຂຈຳເປັນກ່ອນອື່ນໝົດເພື່ອພັດທະນາວຽກງານກົດ ໝາຍສາກົນ ແລະ ສົນທິສັນຍາຢູ່ ສປປ ລາວ ເພື່ອສະໜັບສະໜູນ ສປປ ລາວ ໃນການເຂົ້າຮ່ວມໃນສົນທິສັນຍາສາກົນ, ການສ້າງໃຫ້ກົດໝາຍພາຍໃນມີຄວາມກົມກຽວກັບສົນທິສັນຍາ ສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ການຈັດຕັ້ງປະຄິບັດໃນລະດັບພາຍໃນປະເທດ ຢ່າງມີ ປະສິດທິຜົນ ປະກອບສ່ວນສ້າງໃຫ້ ສປປ ລາວ ກາຍເປັນລັດແຫ່ງກົດໝາຍ ແລະ ການປະຕິບັດນະໂຍບາຍການຕ່າງປະເທດໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືສາກົນ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ.